SORPHIMPHA. 2020. Souphanouvong Journal: Multi-disciplinary Research of Souphanouvong University: ISSN 2521-0653. Vol. 6, Issue 2: Page 215-223.

ວາລະສານວິທະຍາສາດມະຫາວິທະຍາໄລສຸພານຸວົງ, ຄົ້ນຄວ້າວິໄຈສະຫະສາຂາວິຊາ, ວາລະສານເປີດກວ້າງ
ສະບັບທີ 6, ເຫຼັ້ມທີ 2, ກໍລະກົດ-ທັນວາ 2020, ເລກທະບຽນ ISSN 2521-0653

# ການໃຊ້ວິທີສອນແບບບັນຍາຍກັບການຈັດກິດຈະກຳການຮຽນ-ການສອນໄວຍາກອນລາວ ສຳລັບສາຍຄູປະຖົມສຶກສາ[1]

**ພອນຈັນ ສໍພິມພາ**[2]

*ສາຂາ: ພາສາລາວ-ວັນນະຄະດີ ວິທະຍາໄລຄູຫຼວງພະບາງ*

## ບົດຄັດຫຍໍ້

ການຄົ້ນຄວ້າມີຈຸດປະສົງ ເພື່ອສຶກສາປະສິດທິພາບຂອງບົດສອນກ່ຽວກັບໄວຍາກອນລາວ ໂດຍນຳໃຊ້ວິທີສອນແບບບັນຍາຍ ແລະ ເພື່ອປຽບທຽບຜົນການຮຽນກ່ອນ ແລະ ຫຼັງການຮຽນກ່ຽວກັບໄວຍາກອນລາວ ໂດຍນຳໃຊ້ວິທີສອນແບບບັນຍາຍ. ກຸ່ມຕົວຢ່າງແມ່ນນັກຮຽນ ຈຳນວນ 28 ຄົນ ຍິງ 15 ຄົນ, ທີ່ກຳລັງຮຽນສາຂາຄູປະຖົມສຶກສາ ລະບົບ 12+4 ປີທີ 1 ພາກຮຽນທີ 1 ສົກຮຽນ 2017-2018. ໃຊ້ເວລາໃນການຈັດການຮຽນ-ການສອນ 24 ຊົ່ວໂມງ. ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າມີ 1) ບົດສອນ, 2) ແບບທົດສອບວັດຜົນສຳເລັດທາງການຮຽນ. ການວິເຄາະຂໍ້ມູນໃຊ້ຄ່າສະເລ່ຍ ($\bar{X}$) ແລະ ຄ່າຜັນປ່ຽນມາດຕະຖານ (S.D), ຄ່າ E1/E2 ແລະ ທົດສອບຄ່າທີ (T-test). ຜົນການຄົ້ນຄວ້າພົບວ່າ:

- ປະສິດທິພາບບົດສອນໄວຍາກອນລາວໂດຍນຳໃຊ້ວິທີສອນແບບບັນຍາຍເທົ່າກັບ 81.11/82.94 ສູງກວ່າເກນທີ່ຕັ້ງໄວ້ 80/80.
- ຜົນການຮຽນກ່ອນ ແລະ ຫຼັງການຮຽນໄວຍາກອນລາວ ໂດຍນຳໃຊ້ວິທີສອນແບບບັນຍາຍມີຄວາມແຕກຕ່າງກັນໂດຍມີຄະແນນສະເລ່ຍຫຼັງຮຽນ ($\bar{X}$ =37.32, S.D=3.09) ສູງກວ່າຄະແນນສະເລ່ຍກ່ອນຮຽນ ($\bar{X}$ =22.34, S.D=2.99) ດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິທີ່ລະດັບ 0.05.

**ຄຳສຳຄັນ**: ວິທີສອນແບບບັນຍາຍ, ໄວຍາກອນລາວ

[1] **ການອ້າງອີງພາສາລາວ:** ພອນຈັນ ສໍພິມພາ. (2020). **ການໃຊ້ວິທີສອນແບບບັນຍາຍກັບການຈັດກິດຈະກຳການຮຽນ-ການສອນໄວຍາກອນລາວ ສຳລັບສາຍຄູປະຖົມສຶກສາ**, *ວາລະສານວິທະຍາສາດມະຫາວິທະຍາໄລສຸພານຸວົງ, ສະບັບທີ: 6, ເຫຼັ້ມ 2, ໜ້າທີ: 215 - 223.*

[2] ***ຕິດຕໍ່ພົວພັນ***

*ພອນຈັນ ສໍພິມພາ, ບ່ອນສັງກັດວິທະຍາໄລຄູຫຼວງພະບາງ, ໂທລະສັບ/ແຟັກ: 071 212058, ມືຖື: 020 5567, ອີເມວ: dolaanongsay@gmail.com.*

# Using the Lecture Method of teaching and learning Activities about Lao grammar for primary section students

Phonchan SORPHIMPHA[3]

*Dept. of Lao Language and Literature, Luang PraBang Teacher Training College, Lao PDR*

**Abstract**

This research aimed: to study the effectiveness of lesson plans for using lecture Method and, to compare before and after the results of learning about Lao grammar for using Lecture Method. The samples were primary students. There are 28 participants, including 15 female participants, who have been learning at the primary education section, system 12+4 in the first term of academic year 2017-2018. The learning and teaching period was 24 hours. The instruments for research were: 1) a lesson plans, 2) an achievement test. Data analysis was using by mean ( $\overline{X}$ ), standard Deviation (S.D), and data analysis E1/E2 and (T-test). The research has two results of data analysis as following:

- The effectiveness of Lao grammar was using Lecture method equal 81,11/82,94 high than data analysis manipulation 80/80.

- The result of learning Lao grammar before and after teaching the result of how to used Lecture Method are differences, the result of learning after was ( $\overline{X}$ =37,32, S.D=3,09) high than the result before learning ( $\overline{X}$ =22,34, S.D=2,99) considered the result of standard used 0,05.

**Keywords**: Lecture Met, Lao grammar

[3] **Correspondence :**
Phonchan SORPHIMPHA, Dept. of Lao Language and Literature, Luang PraBang Teacher Training College, Lao PDR.
Tel: 020 55671706, Email: dolaanongsay@gmail.com.

## 1. ພາກສະເໜີ

### 1.1 ຫຼັກການ ແລະ ເຫດຜົນ

ວິຊາພາສາລາວເປັນວິຊາໜຶ່ງທີ່ມີຜົນປະໂຫຍດແກ່ທຸກຄົນ ໂດຍສະເພາະຜູ້ທີ່ພວມສຶກສາຮ່ຳຮຽນຄວນຊອກສະແຫວງຫາເພື່ອຮຽນຮູ້ພາສາລາວອັນເປັນເຄື່ອງມືໃນການຕິດຕໍ່ສື່ສານລະຫວ່າງຄົນລາວດຽວກັນ. ຖ້າຫາກຮຽນຮູ້ ແລະ ເຝິກແອບນຳໃຊ້ພາສາລາວໄດ້ດີກໍສາມາດຕິດຕໍ່ພົວພັນກັບຄົນອື່ນເປັນທີ່ເຂົ້າໃຈກັນ ແລະ ຈະໄດ້ຮັບຄວາມສຳເລັດໃນການເຮັດວຽກຮ່ວມກັນເປັນຢ່າງດີ. ພາສາລາວເປັນເຄື່ອງມືໃນການສຶກສາຮ່ຳຮຽນບໍ່ວ່າຢາກຮຽນຮູ້ສິ່ງໃດກໍຕາມຕ້ອງໄດ້ອາໄສທັກສະທາງດ້ານພາສາລາວ ເຊັ່ນ: ທັກສະການຟັງ, ທັກສະການເວົ້າ, ທັກສະການອ່ານ ແລະ ທັກສະການຂຽນ. ພາສາລາວເປັນພາຫະນະຖ່າຍທອດວັດທະນະທຳ ແລະ ຄວາມຈະເລີນຕ່າງໆ ຂອງຊາດລາວຈາກຮຸ່ນຄົນໜຶ່ງໄປຍັງອີກຮຸ່ນຄົນໜຶ່ງສືບເນື່ອງກັນໄປເລື້ອຍໆ ໂດຍບໍ່ຂາດສາຍ. ພາສາລາວມີຄວາມສຳຄັນຕໍ່ການປະກອບວິຊາຊີບ, ບາງອາຊີບກໍອາໄສພາສາລາວໂດຍກົງເຊັ່ນ: ຜູ້ປະກາດຂ່າວທາງວິທະຍຸ, ໂທລະ ພາບ, ນັກຂຽນ, ຜູ້ຄ້າຂາຍ, ນາຍແພດ, ກຳມະກອນ, ນັກການເມືອງ ແລະ ອື່ນໆ (ມີທອງ ສຸວັນມີໄຊ ພ້ອມຄະນະ, 1999:10).

ໄວຍາກອນລາວ ແມ່ນການປາກເວົ້າ ແລະ ການຂຽນພາສາລາວໃຫ້ຖືກຕາມທຳນອງ ແລະ ສຽງສຳນຽງຂອງພາສາລາວ. ພາສາລາວ ເປັນພາສາທີ່ໃຊ້ຄວາມລາວເດີມ ແລະ ຄວາມບາລີ ປະປົນກັນ. ການເວົ້າ ແລະ ການຂຽນພາສາລາວຈຶ່ງໃຊ້ທັງຫຼັກ ພາສາລາວເດີມ ແລະ ຫຼັກພາສາບາລີ. ໄວຍາກອນລາວ ແບ່ງເປັນ 4 ພາກ ຄື: ພາກອັກຂະຫຼະວິທີ, ພາກວາຈີວິພາກ, ພາກວາກາຍະສຳພັນ ແລະ ພາກສັນທະກະວີ (ພູມີ ວົງວິຈິດ, 1967: 5).

ຈາກການຈັດການຮຽນ-ການສອນໃນໄລຍະຜ່ານມາສາມາດສັງເກດໄດ້ວ່າ ນັກສຶກສາຈຳນວນໜຶ່ງມີຄວາມເຂົ້າໃຈຕໍ່ກັບໄວຍາກອນລາວຍັງບໍ່ທັນເລິກເຊິ່ງ, ນັກສຶກສາຍັງບໍ່ສາມາດຈຳແນກ, ວິເຄາະຄຳເວົ້າຕ່າງໆໃນພາສາລາວໄດ້. ດັ່ງນັ້ນ; ຜູ້ຄົ້ນຄວ້າໃນຖານະຜູ້ສອນລາຍວິຊາພາສາລາວພາກໄວຍາກອນລາວຈຶ່ງມີຄວາມສົນໃຈທົດລອງນຳໃຊ້ວິທີສອນແບບບັນຍາຍເພື່ອຈັດກິດຈະກຳການຮຽນ-ການສອນເພາະວ່າ ວິທີສອນແບບບັນຍາຍເປັນວິທີຖ່າຍທອດຄວາມຮູ້ທີ່ໃຊ້ກັນມານານໃນການຮຽນ-ການສອນໃນລະດັບອຸດົມສຶກສາເນື່ອງຈາກເປັນວິທີທີ່ສະດວກ. ສາມາດສອນ ຫຼື ບັນຍາຍໃຫ້ຜູ້ຟັງໄດ້ຫຼາຍຄົນ ໂດຍທົ່ວໄປຈະໃຊ້ໃນກໍລະນີທີ່ຕ້ອງການນຳສະເໜີຄວາມຮູ້ຄັ້ງລະຫຼາຍໆ ໂດຍໃຊ້ເວລາບໍ່ຫຼາຍຈຶ່ງຈັດເປັນວິທີສອນທີ່ປະຢັດເວລາ ໃຫ້ການຮຽນການສອນໄດ້ເປັນຢ່າງດີ. ເປັນການສອນທີ່ເນັ້ນເນື້ອໃນທີ່ນຳສະເໜີ ໂດຍຄູຜູ້ສອນຜູ້ບັນຍາຍຈະສະເໜີບັນຫາວິທີການຕ່າງໆ ສ່ວນນັກສຶກສາກໍສາມາດມີສ່ວນຮ່ວມໃນການແກ້ບັນຫາ. ວິທີນີ້ເໝາະກັບຜູ້ຮຽນຈຳນວນຫຼາຍ ແລະ ຜູ້ບັນຍາຍເປັນຜູ້ຊ່ຽວຊານໃນເລື່ອງນັ້ນໆ ຕ້ອງການນຳສະເໜີເນື້ອໃນຈຳນວນຫຼາຍໃນລັກສະນະຄົມ, ຊັດ, ເລິກ ໂດຍໃຊ້ເວລາບໍ່ນານຈຶ່ງເປັນການຮຽນຮູ້ທີ່ປະຢັດເວລາ ແລະ ຄ່າໃຊ້ຈ່າຍ. (ສຸວິດ ມູນຄຳ ແລະ ອໍລະໄທ ມຸນຄຳ, 2545: 18-20) ໄດ້ກ່າວໄວ້ວ່າ: ການຈັດການຮຽນຮູ້ແບບບັນຍາຍມີຂັ້ນຕອນການສອນດັ່ງນີ້:

1) ຂັ້ນກຽມການຜູ້ສອນຄວນກຽມການດັ່ງນີ້:

- ກຳນົດຈຸດປະສົງຂອງການບັນຍາຍແຕ່ລະຄັ້ງໃຫ້ຊັດເຈນ.
- ສຶກສາພູມຫຼັງຂອງຜູ້ຮຽນກ່ຽວກັບພື້ນຄວາມຮູ້, ຄວາມສາມາດ, ປະສົບການເດີມ, ຄວາມຕ້ອງການ ແລະ ຄວາມສົນໃຈຂອງຜູ້ຮຽນເພື່ອເປັນຂໍ້ມູນໃນການວາງແຜນການຈັດການຮຽນຮູ້.
- ກຽມເນື້ອໃນທີ່ຈະບັນຍາຍໂດຍສຶກສາຄົ້ນຄວ້າຈາກຕຳລາ, ວາລະສານ ແລະ ແຫຼ່ງຄວາມຮູ້ຕ່າງໆລວມທັງປະສົບການຂອງຜູ້ສອນປະສົມປະສານກັນ.
- ກຳນົດເຄົ້າໂຄງຈັດລຳດັບຂັ້ນຕອນຂອງເນື້ອໃນໃຫ້ເໝາະສົມກັບເວລາ ແລະ ລັກສະນະຂອງຜູ້ຮຽນ.

- ກຽມເທັກນິກການນຳສະເໜີ ເພື່ອໃຫ້ການບັນຍາຍມີບັນຍາກາດເຊັ່ນ: ການຍົກຕົວຢ່າງ, ການຍົກອຸທາຫອນປຽບທຽບ, ການອຸປະມາອຸປະໄມ, ການໃຊ້ຂໍ້ມູນສະຖິຕິສຳຄັນແມ່ນການໃຊ້ຄຳຖາມກະຕຸ້ນ ເປັນຕົ້ນ.

- ກຽມສື່ຕ່າງໆ ທີ່ຈະໃຊ້ປະກອບການບັນຍາຍເຊັ່ນ: ຮູບຖ່າຍ, ແຜນທີ່ຂອງຈິງ, ຫຸ່ນຈຳລອງ, ວິດີໂອ, ສະໄລ, ແຜ່ນໃສ, ຫຼື ການນຳສະເໜີຜ່ານໂປຣແກຣມຄອມພິວເຕີ ເປັນຕົ້ນ ເຊິ່ງສື່ຕ່າງໆ ຈະຕ້ອງຢູ່ໃນສະພາບການໃຊ້ງານໄດ້ດີ.

- ກຽມວິທີການປະເມີນຜົນທີ່ຈະໃຊ້ເຊັ່ນ: ການສັງເກດ, ການໃຊ້ຄຳຖາມ ຫຼື ການໃຊ້ແບບທົດສອບກ່ອນ ແລະ ຫຼັງການບັນຍາຍເປັນຕົ້ນ.

2) ຂັ້ນບັນຍາຍ ປະກອບດ້ວຍ

ກ. ຂັ້ນນຳ ເປັນການກຽມຄວາມພ້ອມກ່ອນການຮຽນອາດໃຊ້ວິທີ:

- ຊັກຖາມໂອ້ລົມກັບຜູ້ຮຽນ.

- ທົບທວນການບັນຍາຍໃນຄັ້ງກ່ອນເພື່ອເຊື່ອມໂຍງກັບເນື້ອໃນໃໝ່

- ໃຊ້ບັນຫາເປັນສິ່ງສ້າງຄວາມສົນໃຈເຊັ່ນ: ຂ່າວ, ເຫດການສຳຄັນ, ກໍລະນີຕົວຢ່າງ, ການຕັ້ງຄຳຖາມນຳ ເປັນຕົ້ນ.

- ທົດສອບກ່ອນຮຽນເພື່ອວັດຄວາມຮູ້ຄວາມເຂົ້າໃຈກ່ອນການຮຽນ

ຂ. ຂັ້ນອະທິບາຍເປັນຂັ້ນທີ່ສຳຄັນທີ່ຈະເຮັດໃຫ້ຜູ້ຮຽນເກີດການຮຽນຮູ້, ຜູ້ສອນຄວນດຳເນີນການດັ່ງນີ້:

- ບອກໂຄງເລື່ອງເຄືອຄ່າຍຂອງເນື້ອໃນ ແລະ ແຈ້ງຈຸດປະສົງຂອງບົດຮຽນ.

- ອະທິບາຍໃຫ້ມີຄວາມຊັດເຈນຕາມລຳດັບໃຫ້ຊັດເຈນດັ່ງນີ້:

+ ເວົ້າດ້ວຍນ້ຳສຽງທີ່ເປັນທຳມະຊາດ.

+ ທ່າທາງເປັນມິດ, ຍິ້ມແຍ້ມແຈ່ມໃສ.

+ ສຽງດັງພໍທີ່ທຸກຄົນໄດ້ຍິນຊັດເຈນ.

+ ເວົ້າຈະແຈ້ງ, ບໍ່ຊ້າ ແລະ ບໍ່ໄວເກີນໄປ.

+ ນ້ຳສຽງ, ຈັງຫວະການເວົ້າເນັ້ນປະເດັນສຳຄັນ.

+ ສອດແຊກອາລົມຕະຫຼົກໄດ້ຢ່າງເໝາະສົມ.

- ໃຊ້ສາຍຕາເບິ່ງຜູ້ຮຽນໃຫ້ທົ່ວເຖິງຂະນະບັນຍາຍເປັນການໃຫ້ຄວາມສຳຄັນກັບຜູ້ຮຽນ ແລະ ເປັນການສ້າງຄວາມສຳພັນທີ່ດີ. ນອກຈາກນີ້; ຍັງເປັນການສັງເກດເພື່ອປະເມີນພຶດຕິກຳຜູ້ຮຽນ ແລະ ບັນຍາກາດການຮຽນຮູ້.

- ໃຊ້ສື່ຕ່າງໆ ທີ່ກຽມໄວ້ປະກອບການບັນຍາຍສອດຄ່ອງກັບເນື້ອໃນ ໃນຊ່ວງເວລາທີ່ເໝາະສົມເພື່ອຊ່ວຍດຶງດູດຄວາມສົນໃຈຂອງຜູ້ຮຽນ.

- ຄວນຍົກຕົວຢ່າງປະກອບເນື້ອໃນທີ່ເຂົ້າໃຈຍາກເພື່ອຄວາມກະຈ່າງແຈ້ງ ແລະ ປ້ອງກັນຄວາມສັບສົນ.

- ຄວນໃຊ້ເທັກນິກການແບ່ງກຸ່ມ, ການລະດົມສະໝອງ, ການສະແດງຄວາມຄິດເຫັນຜ່ານວິທີການຕ່າງໆ ການອະພິປາຍກຸ່ມຍ່ອຍ.

- ຄວນໃຊ້ຄຳຖາມລະຫວ່າງການບັນຍາຍ.

- ຄຳຖາມທີ່ຜູ້ສອນຖາມແລ້ວຢຸດໃຫ້ຄິດໜ້ອຍໜຶ່ງ ແລ້ວຜູ້ສອນຊ່ວຍຕອບຄຳຖາມນັ້ນເອງເປັນການກະຕຸ້ນຄວາມສົນໃຈຜູ້ຮຽນ.

- ຄຳຖາມທີ່ຜູ້ສອນຖາມແລ້ວຕ້ອງການໃຫ້ຜູ້ຮຽນຕອບຈິງໆ ເປັນການກະຕຸ້ນໃຫ້ຜູ້ຮຽນຄິດຫາຄຳຕອບ ແລະ ຄຳຕອບທີ່ໄດ້ຈະເປັນຂໍ້ມູນຍ້ອນກັບ ແລະ ເປັນການປະເມີນຄວາມເຂົ້າໃຈຂອງຜູ້ຮຽນອີກທາງໜຶ່ງ.

ຄ. ຂັ້ນສະຫຼຸບ ຄວນດຳເນີນການດັ່ງນີ້:

- ຜູ້ສອນຄວນສະຫຼຸບສາລະສຳຄັນຂອງການບັນຍາຍ.

- ຄວນເປີດໂອກາດໃຫ້ຜູ້ຮຽນຊັກຖາມ ຫຼື ເປີດໂອກາດອະພິປາຍແລກປ່ຽນຄວາມຄິດເຫັນ.

3) ຂັ້ນປະເມີນຜົນການຮຽນຮູ້

ຜູ້ສອນ ແລະ ຜູ້ຮຽນຮ່ວມກັນປະເມີນຜົນການຮຽນຮູ້ດ້ວຍວິທີການຕ່າງໆ ເຊັ່ນ: ທົດສອບຫຼັງການບັນຍາຍ, ເຮັດແບບເຝິກຫັດເພີ່ມເຕີມ ເປັນຕົ້ນ.

ຂັ້ນຕອນການຈັດການຮຽນຮູ້ແບບບັນຍາຍສະຫຼຸບເປັນແຜນພູມດັ່ງນີ້:




**ຮູບພາບ 1:** ຂັ້ນຕອນການຈັດຮຽນຮູ້ແບບບັນຍາຍ

**1.2 ຈຸດປະສົງຂອງການຄົ້ນຄວ້າ**

- ເພື່ອສຶກສາປະສິດທິພາບຂອງບົດສອນກ່ຽວກັບໄວຍາກອນລາວ ໂດຍນຳໃຊ້ວິທີສອນແບບບັນຍາຍ.

- ເພື່ອປຽບທຽບຜົນການຮຽນກ່ອນ ແລະ ຫຼັງການຮຽນກ່ຽວກັບໄວຍາກອນລາວ ໂດຍນຳໃຊ້ວິທີສອນແບບບັນຍາຍ.

**1.3 ສົມມຸດຖານຂອງການຄົ້ນຄວ້າ**

- ບົດສອນກ່ຽວກັບໄວຍາກອນລາວທີ່ນຳໃຊ້ວິທີສອນແບບບັນຍາຍຈະມີປະສິດທິພາບຕາມເກນ 80/80.

- ຜົນການຮຽນກ່ອນ ແລະ ຫຼັງການຮຽນກ່ຽວກັບໄວຍາກອນລາວ ໂດຍນຳໃຊ້ວິທີສອນແບບບັນຍາຍຈະມີຄວາມແຕກຕ່າງກັນດ້ວຍຄ່າຄະແນນຫຼັງຮຽນສູງກວ່າຄ່າຄະແນນກ່ອນຮຽນດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິທີ່ລະດັບ 0.05.

**1.4 ຂອບເຂດການຄົ້ນຄວ້າ**

ກ. ກຸ່ມເປົ້າໝາຍ ທີ່ໃຊ້ໃນການວິໄຈຄັ້ງນີ້ແມ່ນນັກສຶກສາຈຳນວນ 28 ຄົນ ຍິງ 15 ຄົນ, ທີ່ສຶກສາໃນຂະແໜງອະນຸບານ-ປະຖົມ, ສາຍຄູປະຖົມສຶກສາ ລະບົບ 12+4 ປີທີ 1 ພາກຮຽນທີ 1 ສົກຮຽນ 2017-2018.

ຂ. ຂອບເຂດດ້ານເນື້ອໃນວິຊາພາສາລາວ-ວັນນະຄະດີ 1 ມີ ອັກຂະຫຼະວິທີ, ວະຈີວະພາກ ແລະ ວາກາຍະສຳພັນ ນຳໃຊ້ວິທີສອນແບບບັນຍາຍ.

ຄ. ຂອບເຂດດ້ານຕົວປ່ຽນ

- ຕົວປ່ຽນຕົ້ນ (Independent Variable) ຄື: ວິທີສອນແບບບັນຍາຍ

- ຕົວປ່ຽນຕາມ (dependent Variable) ຄື: ປະສິດທິພາບຂອງບົດສອນກ່ຽວກັບໄວຍາກອນລາວ ໂດຍນຳໃຊ້ວິທີສອນແບບບັນຍາຍ, ຜົນການຮຽນກ່ອນ ແລະ ຫຼັງການຮຽນກ່ຽວກັບໄວຍາກອນລາວ ໂດຍນຳໃຊ້ວິທີສອນແບບບັນຍາຍ.

**1.5 ຄາດຄະເນຜົນໄດ້ຮັບ / ປະໂຫຍດ**

- ໄດ້ບົດສອນກ່ຽວກັບໄວຍາກອນລາວທີ່ຈັດກິດຈະກຳການຮຽນ-ການສອນໂດຍນຳໃຊ້ວິທີສອນແບບບັນຍາຍ.

- ຮູ້ຜົນການຮຽນຂອງນັກສຶກສາທີ່ຮຽນກ່ຽວກັບໄວຍາກອນລາວ ໂດຍນຳໃຊ້ວິທີສອນແບບບັນຍາຍ.

- ເປັນການປັບປຸງການຈັດກິດຈະກຳການຮຽນ-ການສອນກ່ຽວກັບໄວຍາກອນລາວ ໂດຍນຳໃຊ້ວິທີສອນແບບບັນຍາຍ.

- ເປັນເອກະສານອ້າງອີງໃຫ້ແກ່ຜູ້ທີ່ມີຄວາມສົນໃຈທີ່ຈະສຶກສາຄົ້ນຄວ້າໃນຫົວຂໍ້ນີ້ຕໍ່ໄປ.

**2. ອຸປະກອນ ແລະ ວິທີການ**

2.1 ເຄື່ອງມືຄົ້ນຄວ້າ

ກ. ບົດສອນ

- ຜູ້ຄົ້ນຄວ້າໄດ້ສຶກສາໂຄງສ້າງຫຼັກສູດພາສາລາວ-ວັນນະຄະດີ 1.

- ສຶກສາຄົ້ນຄວ້າວິທີສອນແບບບັນຍາຍ

- ສຶກສາຄົ້ນຄວ້າເນື້ອໃນບົດຮຽນກ່ຽວກັບໄວຍາກອນລາວ.

- ແຕ່ງບົດສອນ ຈຳນວນ ຓ ບົດ ໂດຍກຳນົດແຕ່ລະບົດສອນມີຈຸດປະສົງ, ເນື້ອໃນບົດຮຽນ, ກິດຈະກຳການຮຽນ-ການສອນ, ການວັດ ແລະ ປະເມີນຜົນ.

ຂ. ແບບທົດສອບ

- ສຶກສາເນື້ອໃນບົດຮຽນກ່ຽວກັບອັກຂະຫຼະວິທີ, ວາຈີວິພາກ ແລະ ວາກະຍະສຳພັນ.

- ສຶກສາທິດສະດີການສ້າງແບບທົດສອບຈາກເອກະສານການວິໄຈເບື້ອງຕົ້ນຂອງ ບຸນຊົມ ສີສະອາດ.

- ສ້າງແບບທົດສອບວັດຜົນສຳເລັດຄວາມຮູ້ຄວາມເຂົ້າໃຈເປັນແບບປາລະໄນເລືອກຕອບ ຊະນິດ 4 ຕົວເລືອກ ຈຳນວນ 45 ຂໍ້. ຖ້າຕອບຖືກໄດ້ 1 ຄະແນນ, ຕອບຜິດໄດ້ 0 ຄະແນນ.

2.2 ວິທີດຳເນີນການທົດລອງ

ຜູ້ຄົ້ນຄວ້າໄດ້ດຳເນີນການຮຽນ-ການສອນໃນພາກຮຽນ 1 ສົກຮຽນ 2017-2018 ໂດຍຄົ້ນຄວ້າເປັນຜູ້ດຳເນີນການສອນເອງ, ກ່ອນດຳເນີນການສອນຜູ້ຄົ້ນຄວ້າໄດ້ທົດສອບຄວາມຮູ້ຄວາມເຂົ້າໃຈຂອງນັກສຶກສາດ້ວຍແບບທົດສອບຈຳນວນ 45 ຂໍ້ ໂດຍໃຊ້ເວລາ 60 ນາທີ. ດຳເນີນການສອນຕາມບົດສອນທີ່ກະກຽມມາໂດຍທີ່ຜູ້ຄົ້ນຄວ້າເປັນຜູ້ບັນຍາຍໂດຍໃຊ້ຫຼາຍເທັກນິກເພື່ອໃຫ້ນັກຮຽນມີສ່ວນຮ່ວມໃນການບັນຍາຍ. ຫຼັງຈາກສອນສຳເລັດແລ້ວຜູ້ຄົ້ນຄວ້າໄດ້ທົດສອບຄວາມຮູ້ຄວາມເຂົ້າໃຈຂອງນັກສຶກສາ ໂດຍໃຊ້ແບບທົດສອບຊຸດເດີມ ໃຊ້ເວລາ 60 ນາທີ ແລ້ວເກັບລວບລວມແບບທົດສອບຄືນ.

2.3 ການວິເຄາະຂໍ້ມູນໃຊ້ຄ່າສະເລ່ຍ ($\bar{X}$) ແລະ ຄ່າຜັນປ່ຽນມາດຕະຖານ (S.D), ຄ່າ E1/E2 ແລະ ທົດສອບຄ່າທີ (T-test).

**3. ຜົນໄດ້ຮັບ**

ປະສິດທິພາບຂອງຂະບວນການຮຽນ-ການສອນ $E_1$=81.11 ແລະ$E_2$=82.94 (ຕາຕະ ລາງທີ 1)

**ຕາຕະລາງ 1.** ປະສິດທິພາບຂອງການຮຽນ-ການສອນ

| ປະສິດທິພາບບົດສອນ | Sum | $\bar{X}$ | **S.D.** | E.1/E.2 |
|---|---|---|---|---|
| ປະສິດທິພາບຂອງຂະບວນການຮຽນ | 1.022 | 36.50 | 3.48 | 81.11/82.94 |
| ປະສິດທິພາບຂອງຜົນການຮຽນ | 1.045 | 37.32 | 3.09 | |

ຜົນການຮຽນກ່ອນ ແລະ ຫຼັງການຮຽນໄວຍາກອນ ໂດຍນຳໃຊ້ວິທີສອນແບບບັນຍາຍຂອງນັກສຶກສາມີຄວາມແຕກຕ່າງກັນດ້ວຍຄະແນນສະເລ່ຍຫຼັງການຮຽນສູງກວ່າຄະແນນສະເລ່ຍກ່ອນການຮຽນ (ຕາຕະລາງ 2)

**ຕາຕະລາງທີ 2:** ການປຽບທຽບຄະແນນກ່ອນການຮຽນ ແລະ ຫຼັງການຮຽນດ້ວຍ T-test

| **ລຳດັບ** | N | $\bar{X}$ | S.D. | **t** ຄິດໄລ່ | $t_{ວິກິດ}$ | Sig |
|---|---|---|---|---|---|---|
| ກ່ອນຮຽນ | 28 | 22.34 | 2.99 | 1.92 | 1.70 | 0.05 |
| ຫຼັງຮຽນ | 28 | 37.32 | 3.09 | | | |

**4. ວິພາກຜົນ**

- ປະສິດທິພາບຂອງບົດສອນກ່ຽວກັບໄວຍາກອນລາວ ໂດຍນຳໃຊ້ວິທີສອນແບບບັນຍາຍເທົ່າກັບ 81.11/82.94 ສູງກວ່າເກນທີ່ຕັ້ງໄວ້ 80/80 ທັງນີ້ກໍເນື່ອງຈາກວ່າ ຜູ້ຄົ້ນຄວ້າໄດ້ສຶກສາຄົ້ນຄວ້າເອກະສານກ່ຽວກັບການອອກແບບກິດຈະກຳການຮຽນ-ການສອນ ແລະ ວິທີການສອນແບບບັນຍາຍຢ່າງເລິກເຊິ່ງກ່ອນຈະແຕ່ງບົດສອນ, ຜູ້ຄົ້ນຄວ້າໄດ້ແຕ່ງບົດສອນໄປຕາມຂັ້ນຕອນ, ຂະບວນການຈັດການກິດຈະກຳການຮຽນ-ການສອນແບບບັນຍາຍເຊິ່ງສອດຄ່ອງກັບ (ສຸວິດ ມູນຄຳ ແລະ ອໍລະໄທ ມູນຄຳ, 2545: 17) ກ່າວ

ວ່າ: ວິທີສອນແບບບັນຍາຍເປັນຂະບວນການທີ່ຜູ້ສອນເປັນຜູ້ຖ່າຍທອດຄວາມຮູ້ໃຫ້ແກ່ຜູ້ຮຽນໂດຍການເວົ້າບອກເລົ່າ, ອະທິບາຍເນື້ອໃນທີ່ຜູ້ສອນໄດ້ກຽມການສຶກສາຄົ້ນຄວ້າມາເປັນຢ່າງດີ, ຜູ້ຮຽນເປັນຝ່າຍຮັບຟັງ, ອາດຈະມີການຈົດບັນທຶກເນື້ອໃນສຳຄັນໃນຂະນະທີ່ຟັງການບັນຍາຍ ຫຼື ອາດມີໂອກາດຊັກຖາມສະແດງຄວາມຄິດເຫັນໄດ້ຖ້າຜູ້ສອນເປີດໂອກາດ.

- ຜົນການຮຽນກ່ອນ ແລະ ຫຼັງການຮຽນກ່ຽວກັບໄວຍາກອນລາວ ໂດຍນຳໃຊ້ວິທີສອນແບບບັນຍາຍມີຄວາມແຕກຕ່າງກັນດ້ວຍຄ່າຄະແນນຫຼັງຮຽນສູງກວ່າຄ່າຄະແນນກ່ອນຮຽນດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິທີ່ລະດັບ 0.05 ທັງນີ້ກໍເນື່ອງຈາກວ່າ ຜູ້ຄົ້ນຄວ້າໄດ້ນຳໃຊ້ຫຼາຍເທັກນິກເຂົ້າໃນການບັນຍາຍ ບໍ່ວ່າຈະເປັນເທັກນິກການສອນແບບການເຮັດວຽກເປັນກຸ່ມນ້ອຍ, ໃຫຍ່ ແລະ ສົນທະນາຖາມ-ຕອບ ເຊິ່ງເປັນເທັກນິກການສອນທີ່ຊ່ວຍຜູ້ຮຽນໄດ້ຊ່ວຍກັນເຮັດວຽກ, ມີຄວາມຮັບຜິດຊອບຕໍ່ວຽກງານທີ່ຕົນເອງໄດ້ຮັບ ແລະ ທີ່ສຳຄັນໄດ້ສົນທະນາແລກປ່ຽນຄວາມຄິດເຫັນເຊິ່ງກັນ ແລະ ກັນພາຍໃນກຸ່ມຕົນເອງ ແລະ ກຸ່ມຂອງເພື່ອນ ແລະ ທີ່ສຳຄັນນັກຮຽນໄດ້ມີສ່ວນຮ່ວມໃນການຮຽນ-ການສອນສອດຄ່ອງກັບ (ສຸວິດ ມູນຄຳ, ອໍລະໄທ ມູນຄຳ, 2545: 18-20) ກ່າວວ່າ: ຜູ້ບັນຍາຍຕ້ອງກຳນົດຈຸດປະສົງຂອງການບັນຍາຍແຕ່ລະຄັ້ງໃຫ້ຊັດເຈນ. ສຶກສາພູມຫຼັງຂອງຜູ້ຮຽນກ່ຽວກັບພື້ນຄວາມຮູ້, ຄວາມສາມາດ, ປະສົບການເດີມ, ຄວາມຕ້ອງການ ແລະ ຄວາມສົນໃຈຂອງຜູ້ຮຽນເພື່ອເປັນຂໍ້ມູນໃນການວາງແຜນການຈັດການຮຽນຮູ້. ກະກຽມເນື້ອໃນທີ່ຈະບັນຍາຍໂດຍສຶກສາຄົ້ນຄວ້າຈາກຕຳລາ, ວາລະສານ ແລະ ແຫຼ່ງຄວາມຮູ້ຕ່າງໆ ລວມທັງປະສົບການຂອງຜູ້ສອນປະສົມປະສານກັນ. ກຳນົດເຄົ້າໂຄງຈັດລຳດັບຂັ້ນຕອນຂອງເນື້ອໃນໃຫ້ເໝາະສົມກັບເວລາ ແລະ ລັກ ສະນະຂອງຜູ້ຮຽນ. ກະກຽມເທັກນິກການນຳສະເໜີ ເພື່ອໃຫ້ການບັນຍາຍມີບັນຍາກາດເຊັ່ນ: ການຍົກຕົວ ຢ່າງ, ການຍົກອຸທາຫອນປຽບທຽບ, ການອຸປະມາອຸປະໄມ, ການໃຊ້ຂໍ້ມູນສະຖິຕິສຳຄັນແມ່ນການໃຊ້ຄຳຖາມກະຕຸ້ນ ແລະ ອື່ນໆ. ຜູ້ບັນຍາຍມີການກະກຽມສື່ຕ່າງໆ ທີ່ຈະໃຊ້ປະກອບການບັນຍາຍເຊັ່ນ: ຮູບຖ່າຍ, ແຜນທີ່ຂອງຈິງ, ຫຸ່ນຈຳລອງ, ວີດີໂອ, ສະໄລ, ແຜ່ນໃສ, ຫຼື ການນຳສະເໜີຜ່ານໂປຣແກຣມຄອມພິວເຕີ ເປັນຕົ້ນ ເຊິ່ງສື່ຕ່າງໆ ຈະຕ້ອງຢູ່ໃນສະພາບການໃຊ້ງານໄດ້ດີ ແລະ ກະກຽມວິທີການປະເມີນຜົນທີ່ຈະໃຊ້ເຊັ່ນ: ການສັງເກດ, ການໃຊ້ຄຳຖາມ ຫຼື ການໃຊ້ແບບທົດສອບກ່ອນ ແລະ ຫຼັງການບັນຍາຍເປັນຕົ້ນ.

## 5. ສະຫຼຸບ

ການຄົ້ນຄວ້າມີຈຸດປະສົງເພື່ອສຶກສາປະສິດທິພາບຂອງບົດສອນກ່ຽວກັບໄວຍາກອນລາວ ໂດຍນຳໃຊ້ວິທີສອນແບບບັນຍາຍ ແລະ ເພື່ອປຽບທຽບຜົນການຮຽນກ່ອນ ແລະ ຫຼັງການຮຽນກ່ຽວກັບໄວຍາກອນລາວ ໂດຍນຳໃຊ້ວິທີສອນແບບບັນຍາຍ. ກຸ່ມຕົວຢ່າງທີ່ໃຊ້ໃນການຄົ້ນຄວ້າແມ່ນນັກຮຽນ ຈຳນວນ 28 ຄົນ ຍິງ 15 ຄົນ, ທີ່ກຳລັງສຶກສາທີ່ຂະແໜງອະນຸບານ-ປະຖົມ ສາຍຄູປະຖົມສຶກສາ ລະບົບ 12+4 ປີທີ 1 ພາກຮຽນທີ 1 ສົກຮຽນ 2017-2018. (ການເລືອກກຸ່ມຕົວຢ່າງຕາມສະດວກ) (ບຸນຊົມ ສີສະອາດ, 2554: 45) ເຄື່ອງມືທີ່ໃຊ້ເກັບລວບລວມຂໍ້ມູນມີ ບົດສອນ ຈຳນວນ 8 ບົດ ແລະ ແບບທົດສອບ ຈຳນວນ 45 ຂໍ້ ເຊິ່ງຜູ້ຄົ້ນຄວ້າເປັນຜູ້ຈັດການຮຽນ-ການສອນໃຊ້ເວລາ 24 ຊົ່ວໂມງ, ກ່ອນດຳເນີນການສອນຜູ້ວິໄຈໄດ້ທົດສອບຄວາມຮູ້ຄວາມເຂົ້າໃຈຂອງນັກຮຽນໂດຍໃຊ້ແບບທົດສອບຈຳນວນ 45 ຂໍ້. ຈາກນັ້ນ; ດຳເນີນກິດຈະກຳການຮຽນ-ການສອນຕາມບົດສອນທີ່ແຕ່ງໄວ້, ຫຼັງຈາກສອນສຳເລັດແລ້ວຜູ້ວິໄຈທົດສອບຄວາມຮູ້ຄວາມເຂົ້າ ໃຈຂອງນັກສຶກສາຫຼັງການຮຽນກ່ຽວກັບໄວຍາກອນລາວ ໂດຍນຳໃຊ້ວິທີສອນແບບບັນຍາຍ ໂດຍໃຊ້ແບບທົດສອບຊຸດເດີມ. ຫຼັງຈາກນັກຮຽນຕອບແລ້ວກໍເກັບລວບລວມແບບທົດສອບ ເພື່ອນຳມາຄິດໄລ່ຫາຄ່າສະເລ່ຍ ($\bar{X}$) ແລະ ຄ່າຜັນປ່ຽນມາດຕະຖານ (S.D), ຄ່າ E1/E2 ແລະ ທົດສອບຄ່າທີ (T-test). ຜົນການຄົ້ນຄວ້າພົບວ່າ:

- ປະສິດທິພາບຂອງບົດສອນກ່ຽວກັບໄວຍາກອນລາວ ໂດຍນຳໃຊ້ວິທີສອນແບບບັນຍາຍເທົ່າກັບ 81.11/82.94 ສູງກວ່າເກນທີ່ຕັ້ງໄວ້ 80/80.

- ຜົນການຮຽນກ່ອນ ແລະ ຫຼັງການຮຽນກ່ຽວກັບໄວຍາກອນລາວ ໂດຍນຳໃຊ້ວິທີສອນແບບບັນຍາຍມີຄວາມແຕກຕ່າງກັນດ້ວຍຄ່າຄະແນນຫຼັງຮຽນສູງກວ່າຄ່າຄະແນນກ່ອນຮຽນດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິທີ່ລະດັບ 0.05 ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ ແລະ ເພື່ອເຮັດໃຫ້ການຄົ້ນຄວ້າໃນຕໍ່ໜ້າໄດ້ຮັບປະສິດທິພາບ ແລະ ປະສິດທິຜົນຍິ່ງຂຶ້ນຜູ້ຄົ້ນຄວ້າ:

- ຄວນເຮັດການຄົ້ນຄວ້າ ໂດຍເນັ້ນຫົວຂໍ້ໃດໜຶ່ງເຊັ່ນ: ອັກຂະຫຼະວິທີ, ວະຈີວິພາກ ແລະ ວາກາຍະສຳພັນເພື່ອຈະໄດ້ຮູ້ຜົນການຮຽນ ແລະ ບັນຫາການຮຽນຂອງນັກຮຽນຢ່າງລະອຽດຊັດເຈນກວ່ານີ້

- ຄູຄວນສ້າງສື່ການສອນໃຫ້ຫຼາກຫຼາຍເພື່ອເປັນການກະຕຸກຊຸກຍູ້ນັກຮຽນໃຫ້ມີສ່ວນໃນກິດຈະກຳສົນທະນາຖາມ-ຕອບຫຼາຍຕື່ມອີກ.

- ຄວນນຳໃຊ້ວິທີສອນແບບເນັ້ນຂະບວນການປະຕິບັດຈິງຫຼາຍກວ່ານີ້ເພື່ອຈະເຮັດໃຫ້ເຫັນຜົນການຮຽນຂອງນັກຮຽນຊັດເຈນຂຶ້ນ.

## 6. ຄວາມຮູ້ບຸນຄຸນ

ບົດຄົ້ນຄວ້າເຫຼັ້ມນີ້ປະສົບຜົນສຳເລັດດ້ວຍດີກໍ່ເນື່ອງມາຈາກໄດ້ຮັບຄວາມກະລຸນນາຢ່າງຍິ່ງຈາກ ຄະນະອຳນວຍການວິທະຍາໄລຄູຫຼວງພະບາງທີ່ໃຫ້ການສະໜັບສະໜູນ ແລະ ສົ່ງເສີມການເຮັດການຄົ້ນຄວ້າການຮຽນ-ການສອນໃນຫ້ອງຮຽນຜູ້ຄົ້ນຄວ້າ ຂໍຂອບໃຈມານະໂອກາດນີ້.

ຜູ້ຄົ້ນຄວ້າຂໍຂອບໃຈມາຍັງຄະນະກຳມະການປ້ອງກັນບົດໃຫ້ຄຳແນະນຳ, ຂໍ້ຄິດ ແລະ ແນວທາງການແກ້ໄຂປັບປຸງຂໍ້ບົກຜ່ອງຕ່າງໆໃນການເຮັດບົດຄົ້ນຄວ້າຄັ້ງນີ້ ດ້ວຍຄວາມເອົາໃຈໃສ່ຢ່າງດີຈົນສາມາດຈັດພິມໄດ້ສຳເລັດ. ຜູ້ຄົ້ນຄວ້າຂໍຂອບໃຈເປັນຢ່າງສູງມານະໂອກາດນີ້.

ຂໍຂອບໃຈຢ່າງສູງມາຍັງ**ນັກ**ສຶກສາສາຂາວິຊາຄູປະຖົມສຶກສາປີທີ 1 ລະບົບ 12+4 ທີ່ໃຫ້ຄວາມຮ່ວມມືໃນການສອນ ແລະ ການເກັບລວບລວມຂໍ້ມູນຄັ້ງນີ້.

## 7. ເອກະສານອ້າງອີງ

ເກດອຸມາ ນາກວາຣີ. (2555). *ການສຶກສາຜົນສຳລັດທາງການຮຽນຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 1 ໂດຍໃຊ້ຊຸດການສອນແບບບັນຍາຍ ລາຍວິຊາຄອມພິວເຕີເພີ່ມເຕີມເລື່ອງການສ້າງກາຕູນແອນິເມຊັນສອງມິຕິ.* ປະລິນຍາສຶກສາສາດມະຫາບັນດິດ, ສາຂາວິຊາ ເທັກໂນໂລຊີ ແລະ ສື່ສານການສຶກສາ. ຄະນະສຶກສາສາດອຸດສາຫະກຳ. ມະຫາວິທະຍາໄລເທັກໂນໂລຊີລາດຊະມົງຄົນທັນຍະບູລີ.

ສຸວິດ ມູນຄຳ, ອໍລະໄທ ມູນຄຳ. (2545). *19 ວິທີການຈັດການຮຽນຮູ້: ເພື່ອພັດທະນາຄວາມຮູ້ ແລະ ທັກສະ.* ກຸງເທບ: ໂຮງພິມພາບພິມ.

ບຸນຊົມ ສີສະອາດ. (2554). *ການວິໄຈເບື້ອງຕົ້ນ.* ກຸງເທບມະຫານະຄອນ: ສຸວີຣິຍາສານ.

ປີງຄຳ ສີສຸວັນ ພ້ອມຄະນະ. (2015). *ປຶ້ມຄູ່ມືແນະນຳເພີ່ມເຕີມການສອນ ວິຊາພາສາລາວ ຊັ້ນປະຖົມສຶກສາປີທີ 1, 2, 3.* ກະຊວງສຶກສາທິການ ແລະ ກິລາ, ກົມສ້າງຄູພະນັກບຳລຸງຄູ: GoodHead Printing and Packaging Group Co., Ltd.

ພູມີ ວົງວິຈິດ. (1967). *ໄວຍາກອນລາວ.* ຊຳເໜືອ: ພະແນກສຶກສາສູນກາງ.

ມີທອງ ສຸວັນມີໄຊ ພ້ອມດ້ວຍຄະນະນ. (1999). *ແບບຮຽນພາສາລາວ ແລະ ວັນນະຄະດີ ຊັ້ນມັດທະຍົມປີທີ 1 .* ກະຊວງສຶກສາທິການ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາແຫ່ງຊາດ: ໂຮງພິມສຶກສາ.

ທຸມພັນ ຄອນສະຫວັດ. (2011). ***ເອກະສານປະກອບການຮຽນ-ການສອນວິຊາການຂຽນບົດລາຍງານຈົບຊັ້ນນັກສຶກສາປີສຸດທ້າຍ.*** ວິທະຍາໄລຄູຫຼວງພະບາງ.

ອ່ອນແກ້ວ ນວນນະວົງ ພ້ອມຄະນະ. (2000). *ໄວຍາກອນລາວປັດຈຸບັນ ພາກທີ 1 ອັກຂະຫຼະວິທີ.* ກະຊວງສຶກສາທິການ ແລະ ກິລາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາແຫ່ງຊາດ: ໂຮງພິມສຶກສາ.

_______. (2000). *ໄວຍາກອຣລາວປັດຈຸບັນ ພາກທີ lll ວາກາຍະສຳພັນ.* ກະຊວງສຶກສາທິການ ແລະ ກະລາ, ສະຖາລັນຄົ້ນຄວ້າວິທະຍາສາດການສຶກສາແຫ່ງຊາດ: ໂຮງພິມສຶກສາ.

_______. (2000). *ໄວຍາກອນລາວປັດຈຸບັນ ພາກທີ ll ວະຈີວິພາກ.* ກະຊວງສຶກສາທິການ ແລະ ກິລາ, ສະຖາບັນວິທະຍາສາດການສຶກສາແຫ່ງຊາດ: ໂຮງພິມສຶກສາ.